10 Shenton Way
#15-08, MAS Building
Singapore 079117
T: +65 6323 9844
F: +65 6223 8187
www.amro-asia.org

# AREO 2018 ສະບັບພາສາລາວ

# ທ່າອ່ຽງເສດຖະກິດຂອງພາກພື້ນ ອາຊຽນ+3 (AREO) ປີ 2018

# ASEAN+3 Regional Economic Outlook (AREO) 2018

## ຂໍ້ຄວາມສຳຄັນ

### ສະພາບເສດຖະກິດມະຫາພາກ ແລະ ສິ່ງທ້າທາຍ

1. ໃນປີ 2018 ການຂະຫຍາຍຕົວຂອງ GDP ໃນພາກພື້ນອາຊຽນ+3 ແມ່ນຄາດວ່າຈະຢູ່ທີ່ 5.4% ຈາກຄວາມຕ້ອງການພາຍໃນ ແລະ ອັດຕາການຂະຫຍາຍຕົວຂອງການສົ່ງອອກ ແລະ ມີອັດຕາເງິນເຟີ້ທີ່ຄົງທີ່. ການຂະຫຍາຍຕົວຂອງປະເທດຈີນ ແລະ ຍີ່ປຸ່ນ, ຊຶ່ງເປັນສອງປະເທດທີ່ມີເສດຖະກິດຂະໜາດໃຫຍ່ທີ່ສຸດຢູ່ໃນພາກພື້ນທີ່ມີສະ ຖຽນລະພາບ.

2. ອີງຕາມການວິເຄາະຂອງ AMRO, ເສດຖະກິດໃນພາກພື້ນສ່ວນໃຫຍ່ແມ່ນຢູ່ໃນໄລຍະກາງຂອງການດຳເນີນທຸລະກິດ ຊຶ່ງມີການຂະຫຍາຍຕົວດ້ວຍການຜະລິດຂະໜາດນ້ອຍທີ່ໃກ້ຄຽງກັບສູນ (0) ແລະ ອັດຕາເງິນເຟີ້ທີ່ຄົງຕົວ. ໃນຮອບວຽນຂອງການປ່ອຍສິນເຊື່ອ, ການປ່ອຍສິນເຊື່ອໄດ້ເລີ່ມຊ້າລົງໃນຫຼາຍຂົງເຂດເສດຖະກິດໃນພາກພື້ນຫຼັງຈາກໄລຍະເວລາຂອງການຂະຫຍາຍຕົວທີ່ສູງຂຶ້ນ, ຊຶ່ງສະແດງໃຫ້ເຫັນເຖິງຜົນຂອງການປະຕິບັດນະໂຍບາຍຢ່າງຕັ້ງໜ້າຂອງເຈົ້າໜ້າທີ່.

3. ການເພີ່ມຂຶ້ນຂອງຄວາມຕ້ອງການພາຍນອກໄດ້ເຮັດໃຫ້ພາກພື້ນສາມາດສ້າງສິ່ງປ້ອງກັນຜົນກະທົບຈາກພາຍນອກທີ່ອາດຈະເກີດຂຶ້ນ. ປະຈຸບັນອັດຕາແລກປ່ຽນໃນພາກພື້ນແມ່ນມີຄວາມຍືດຍຸ່ນຫຼາຍຂຶ້ນ ແລະ ໄດ້ມີບົດບາດສຳຄັນຫຼາຍຂຶ້ນໃນການຮັບມືກັບຜົນກະທົບທາງນອກ.

4. ແຜນທີ່ຄວາມສ່ຽງທົ່ວໂລກຂອງ AMRO ທີ່ເປັນເຄື່ອງມືວິເຄາະຄວາມອາດສາມາດ ແລະ ຄວາມຊັດເຈນຂອງຄວາມສ່ຽງ, ໄດ້ຊີ້ໃຫ້ເຫັນວ່າພາກພື້ນນີ້ກຳລັງປະເຊີນກັບຄວາມສ່ຽງຈາກໄລຍະສັ້ນທັງສອງແບບຄື: ການປັບຕົວຂຶ້ນຂອງສະພາວະການເງິນໂລກທີ່ໄວຂຶ້ນກວ່າທີ່ຄາດການໄວ້ ແລະ ການເພີ່ມຂຶ້ນຂອງຄວາມເຄັ່ງຕຶງທາງດ້ານການຄ້າທົ່ວໂລກ. ຖ້າຄວາມສ່ຽງເຫຼົ່ານີ້ເກີດຂຶ້ນ, ຈະເກີດມີຜົນກະທົບພາຍນອກຕໍ່ພາກພື້ນໂດຍການໄຫຼອອກຂອງເງິນທຶນ, ຕົ້ນທຶນໃນການກູ້ຢືມສູງຂຶ້ນ ແລະ ສິ່ງຜົນກະທົບດ້ານລົບຕໍ່ການລົງທຶນ ແລະ ການຄ້າ.

5. ເພື່ອແກ້ໄຂຄວາມສ່ຽງ ແລະ ການເຕີບໂຕແບບຍືນຍົງ, ຜູ້ກຳນົດນະໂຍບາຍຢູ່ໃນພາກພື້ນຄວນສືບຕໍ່ສ້າງຄວາມຍືດຍຸ່ນທາງດ້ານນະໂຍບາຍ, ໂດຍສະເພາະແມ່ນນະໂຍບາຍການເງິນ, ເພື່ອສ້າງສະພາບທາງດ້ານການເງິນໂລກທີ່ຮັດກຸມຂຶ້ນລ່ວງໜ້າ. ນະໂຍບາຍການເງິນອາດຈະມີບົດບາດໃນການສະໜັບສະໜູນການຂະຫຍາຍຕົວ ອີງຕາມງົບປະມານທີ່ມີຢູ່ ແລະ ນະໂຍບາຍງົບປະມານ. ໃນຂະແໜງການທີ່ມີຄວາມສ່ຽງ ທີ່ຂຶ້ນກັບການຂະຫຍາຍຕົວຂອງສິນ

ເຊື່ອໃນອະດີດ, ມາດຕະການປົກປ້ອງຄວາມສ່ຽງທາງດ້ານການເງິນສາມາດຊ່ວຍຮັກສາສະຖຽນລະພາບທາງດ້ານການເງິນໄດ້.

## ຄວາມຍືດຍຸ່ນ ແລະ ການເຕີບໂຕຂອງເສດຖະກິດໃນໂລກທີ່ມີການປ່ຽນແປງ

1. ປະເທດສະມາຊິກອາຊຽນ+3 ໄດ້ດຳເນີນຍຸດທະສາດ "ການຜະລິດເພື່ອການສົ່ງອອກ" ໃນຫຼາຍທົດສະວັດທີ່ຜ່ານມາ, ຊຶ່ງໄດ້ສ້າງແຮງກະຕຸ້ນທີ່ເຂັ້ມແຂງ ແລະ ຂັບເຄື່ອນໃນໂຕ ເພື່ອສົ່ງເສີມການເຕີບໂຕຂອງເສດຖະກິດ, ການຈ້າງງານ, ການຜະລິດ ແລະ ຄ່າຈ້າງ.
2. ນະໂຍບາຍການຜະລິດເພື່ອສົ່ງອອກນີ້ ແມ່ນກຳລັງທົດລອງຈັດຕັ້ງປະຕິບັດ ໂດຍການປ່ຽນແປງໂຄງສ້າງການປະເມີນຕ່ອງໂສ້ການຜະລິດຂອງໂລກ ທີ່ສະແດງໃຫ້ເຫັນສັນຍານຂອງການເພີ່ມຂຶ້ນໂດຍການເພີ່ມຂີດຄວາມສາມາດຂອງການຜະລິດພາຍໃນ ຊຶ່ງເຮັດໃຫ້ປະເທດຫຼຸດຜ່ອນການນຳເຂົ້າວັດຖຸດິບເຄິ່ງສຳເລັດຮູບ. ການສ້າງຄວາມສົມດຸນຕໍ່ຜົນກະທົບເຫຼົ່ານີ້ ຕ້ອງໄດ້ເພີ່ມຄວາມຕ້ອງການຂັ້ນສຸດທ້າຍຢູ່ໃນພາກພື້ນ ເພື່ອຮອງຮັບການສົ່ງອອກຂອງພາກພື້ນທີ່ເພີ່ມຂຶ້ນ ແລະ ສາມາດຊ່ວຍໃນການປົກປ້ອງຜົນກະທົບຈາກພາຍນອກໄດ້.
3. ເຕັກໂນໂລຊີໄດ້ພິສູດໃຫ້ເຫັນວ່າ ມັນເປັນດາບສອງຄົມ ສຳລັບການຜະລິດເພື່ອສົ່ງອອກ ເພື່ອກະຕຸ້ນການຂະຫຍາຍຕົວ. ເຊັ່ນ ການຜະລິດທີ່ນຳໃຊ້ເຕັກໂນໂລຊີ ແລະ ລະບົບອັດຕະໂນມັດ ທີ່ຫຼຸດໂອກາດໃນການສ້າງວຽກເຮັດງານທຳທຽບກັບໄລຍະຜ່ານມາ. ອີກດ້ານໜຶ່ງ, ເຕັກໂນໂລຊີໄດ້ສະໜັບສະໜູນການຂະຫຍາຍຕົວຂອງຂະແໜງ ການບໍລິການ ທີ່ເປັນທ່າແຮງໃໝ່ຂອງການເຕີບໂຕ ແລະ ການຈ້າງງານ.
4. ເພື່ອແກ້ໄຂບັນດາສິ່ງທ້າທາຍເຫຼົ່ານີ້, ພາກພື້ນນີ້ຄວນເສີມຂະຫຍາຍການເຊື່ອມຕໍ່ລະຫວ່າງພາກພື້ນ ແລະ ການເຊື່ອມໂຍງເຂົ້າໃນການພັດທະນາຄວາມຕ້ອງການພາຍໃນພາກພື້ນ ແລະ ເພີ່ມທະວີຄວາມຍືດຍູ່ນຂອງພາກພື້ນເພື່ອຕ້ານກັບຜົນກະທົບຈາກພາຍນອກ. ສຳລັບເສດຖະກິດຂອງແຕ່ລະປະເທດ, ຄຳແນະນຳຫຼັກ ແມ່ນຄວນສ້າງຄວາມຍືດຍຸ່ນ ໂດຍການພັດທະນາທ່າແຮງຂອງການເຕີບໂຕໃຫ້ຫຼາຍຂຶ້ນ ເຊິ່ງລວມທັງຂະແໜງການບໍລິການທີ່ກຳລັງຂະຫຍາຍຕົວ.
5. ຊັບພະຍາກອນທຳມະຊາດທີ່ອຸດົມບູນ ແລະ ຄວາມຫຼາກຫຼາຍຂອງການພັດທະນາພາຍໃນພາກພື້ນອາຊຽນ+3 ແມ່ນແຫຼ່ງກຳລັງທີ່ເຂັ້ມແຂງ. ນະໂຍບາຍຄວນສຸມໃສ່ການພັດທະນາການເຊື່ອມໂຍງໃນພາກພື້ນໂດຍຜ່ານການລົງທຶນຢູ່ພາຍໃນ ແລະ ການເຊື່ອມໂຍງພື້ນຖານໂຄງລ່າງຢູ່ໃນພາກພື້ນ, ລວມທັງນະໂຍບາຍອຳນວຍຄວາມສະດວກທາງດ້ານການຄ້າ. ນະໂຍບາຍການພັດທະນາຂະແໜງບໍລິການ ແລະ ຊັບພະຍາກອນມະນຸດແມ່ນມີຄວາມສຳຄັນ, ລວມທັງການເປີດເສລີການບໍລິການ ແລະ ການພັດທະນາບຸກຄະລາກອນໃນພາກພື້ນອາຊຽນ+3 ໂດຍການນຳໃຊ້ນະໂຍບາຍສະໜັບສະໜູນທາງດ້ານແຮງງານ ແລະ ນະໂຍບາຍຄົນເຂົ້າເມືອງ.

ຄຳສະຫງວນສິດ: ລາຍງານສະບັບພາສາລາວເບື້ອງຕົ້ນນີ້ ແປຈາກຕົ້ນສະບັບທີ່ເປັນພາສາອັງກິດ (http://www.amro-asia.org/asean3-regional-economic-outlook-2018-key-messages). ເຖິງແມ່ນວ່າຂໍ້ຄວາມຕ່າງໆໃນສະບັບແປຈະໄດ້ຮັບການກວດສອບຄວາມຖືກຕ້ອງຂອງການແປແລ້ວ, ໃນກໍລະນີທີ່ມີຄວາມແຕກຕ່າງລະຫວ່າງຕົ້ນສະບັບພາສາອັງກິດ ແລະ ສະບັບພາສາລາວ, ແມ່ນໃຫ້ອີງໃສ່ຕົ້ນສະບັບພາສາອັງກິດເປັນຫຼັກ.